ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຍຸຕິທຳ
ກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ — ເລກທີ 554/ກຍ.ກຄສ

ນະຄອນຫຼວງວຽງຈັນ, ວັນທີ 17. ພະຈິກ. 2018

C2
24/11/2019

# ແຈ້ງການ

ເຖິງ: ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແຂວງຫຼວງພະບາງ.
ເລື່ອງ: ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

- ອີງຕາມ ມາດຕາ 10 (ໃໝ່) ຂອງກົດໝາຍ ວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສະບັບເລກທີ 04/ສພຊ, ລົງວັນທີ 25 ກໍລະກົດ 2008;
- ອີງຕາມ ຂໍ້ຕົກລົງຂອງ ລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 462/ກຍ, ລົງວັນທີ 09 ພຶດສະພາ 2017 ວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວຂອງກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
- ອີງຕາມ ຄຳພິພາກສາ ສະບັບເລກທີ 63/ລລ.ພ, ລົງວັນທີ 25 ຕຸລາ 2017 ຂອງສານປະຊາຊົນສູງສຸດ ຂັ້ນລົບລ້າງ.

ຄະດີລະຫວ່າງ

ທ້າວ ເພັດຈຳພອນ ຂຸນດາລາ, ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ 02, ບ້ານ ຊຽງທອງ, ເມືອງ ຫຼວງອພະບາງ,ແຂວງ ຫຼວງພະບາງ.............................................................ໂຈດ;

ທ້າວ ບຸນທະວີ ຄໍລະຍົກ...........................................................(ທະນາຍຄວາມຝ່າຍໂຈດ);

ນາງ ບຸນທັນ, ອາຍຸ 58 ປີ, ສັນຊາດ ລາວ, ອາຊີບ ຄ້າຂາຍ, ປັດຈຸບັນຢູ່ໜ່ວຍ 05, ບ້ານ ສັງຄະໂລກ, ເມືອງ ຫຼວງພະບາງ, ແຂວງ ຫຼວງພະບາງ.................................................................................ຈຳເລີຍ.

ກ່ຽວເລື່ອງ: ທວງເອົາເງິນຄືນ.

ກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັກດສິນຂອງສານ ກະຊວງຍຸຕິທຳ ໄດ້ຮັບບົດລາຍງານ ສະບັບເລກທີ 510/ ຍຕທ.ຫຼບ, ລົງວັນທີ 14 ພະຈິກ 2018 ຂອງພະແນກຍຸຕິທຳ ແຂວງ ຫຼວງພະບາງ ຊຶ່ງໄດ້ລາຍງານການຈັດຕັ້ງປະຕິບັດຄະດີດັ່ງກ່າວ ພ້ອມທັງຂໍທິດຊີ້ນຳໃນການຈັດຕັ້ງປະຕິບັດ.

ຜ່ານການຄົ້ນຄວ້າພິຈາລະນາແລ້ວເຫັນວ່າ ຕໍ່ກັບແຈ້ງການ ສະບັບເລກທີ 180/ຄຍປປ, ລົງວັນທີ 22 ຕຸລາ 2018 ຂອງຄະນະກຳມາທິການຍຸຕິທຳ ແລະ ປກຊ-ປກສ ສະພາປະຊາຊົນແຂວງຫຼວງພະບາງ ນັ້ນ ໂດຍອີງຕາມ ມາດຕາ 41 ຂອງກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານແລ້ວ ແມ່ນບໍ່ເປັນສາເຫດທີ່ພາໃຫ້ໂຈະການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ແຕ່ກ່ອນຈະສືບຕໍ່ປະຕິບັດຄວນປະສານສົມທົບ ຫຼື ຈັດກອງປະຊຸມຮ່ວມກັບຫຼາຍພາກສ່ວນ ເພື່ອປຶກສາຫາລືໃຫ້ມີຄວາມເປັນເອກະພາບກັນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຮ. ຫົວໜ້າກົມ

ບ່ອນສົ່ງ:
- ເກັບມ້ຽນ 03 ສະບັບ

ກະຊວງຍຸຕິທຳ
ກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

ແສງເພັດ ລຸ່ງມພຣະຈັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄົ້ນຄວ້າ

ຈັດຕັ້ງປະຕິບັດຄຳຕັດສິນຂອງສານ

## ບົດບັນທຶກກອງປະຊຸມ

- **ອີງຕາມ** ມາດຕາ 11, 28 ( ໃໝ່ ) ຂອງກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 25 ກໍລະກົດ 2008.
- **ອີງຕາມ** ຄຳພິພາກສາ ສະບັບເລກທີ 63/ລລ.ພ ລົງວັນທີ 25 ຕຸລາ 2017 ຂອງສານປະຊາຊົນສູງສຸດ.
- **ອີງຕາມ** ແຈ້ງການ ສະບັບເລກທີ 554/ກຍ.ກດສ ລົງວັນທີ 17 ທັນວາ 2018 ຂອງກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

**ລະຫວ່າງ :**

ທ້າວ ເພັດຈຳພອນ..........................................................................................ໂຈດ.

ນາງ ບຸນທັນ..........................................................................................ຈຳເລີຍ.

**ກ່ຽວເລື່ອງ : ທວງເອົາເງິນຄືນ.**

ໃນເວລາ **14: 00** ໂມງ, ຕອນແລງ ຂອງວັນທີ **20 ກຸມພາ 2019** ພະແນກຍຸຕິທຳແຂວງ ຫຼວງພະບາງຈຶ່ງໄດ້ເຊີນທາງຄະນະກຳມະການຈາກພາກສ່ວນຕ່າງໆໄດ້ເປີດກອງປະຊຸມຂຶ້ນ.

❖ **ໂດຍມີຄະນະກຳມະການເຂົ້າຮ່ວມດັ່ງລຸ່ມນີ້:**

1. ທ່ານ ຢ່າຢຸ້ຕ້າ ລໍາຊາຊໍ່ — ຮອງພະແນກຍຸຕິທຳແຂວງ ຫຼວງພະບາງ
2. ທ່ານ ບຸນມີ ທຳມະວົງຈິດ — ອົງການໄອຍະການປະຊາຊົນແຂວງ ຫຼວງພະບາງ
3. ທ່ານ ຄຳພັນ ທິດາລັກ — ຮອງຫົວໜ້າຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ
4. ທ່ານ ບຸນຈິນ ສຸວັນວິໄຊ — ຮອງຫົວໜ້າຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ
5. ທ່ານ ພອນ ກຸລາເດດ — ພະນັກງານຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ
6. ທ່ານ ວົງສະຫ້ອນ ນິລະວົງສາ — ພະນັກງານຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ
7. ທ່ານ ອຸ່ນຄຳ — ປ ກ ສ ແຂວງ ຫຼວງພະບາງ
8. ທ່ານ ບຸນທອນ ທິບພະວົງ — ຫ້ອງວ່າການປົກຄອງແຂວງ ຫຼວງພະບາງ
9. ທ່ານ ຄຳໝັ້ນ — ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
10. ທ່ານ ທອງພັນ ຊົງ — ສະພາປະຊາຊົນແຂວງ ຫຼວງພະບາງ

11. ທ່ານ ນາງ ສິມໝາຍ ຄະນະກວດກາພັກ - ລັດ

ໂດຍປະຕິບັດຕາມແຈ້ງການສະບັບເລກທີ 554/ກຍ.ກຄສ ລົງວັນທີ 17 ທັນວາ 2018 ຂອງກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ກະຊວງຍຸຕິທຳ. ສະນັ້ນໃນຄັ້ງວັນທີ 20 ກຸມພາ 2019 ພະແນກຍຸຕິທຳຈຶ່ງໄດ້ເຊີນພາກສ່ວນກ່ຽວຂ້ອງມາປຶກສາຫາລືກັນ ຫຼັງຈາກໄດ້ປຶກສາຫາລືກັນແລ້ວແມ່ນກອງປະຊຸມໄດ້ມີຄວາມເປັນເອກະພາບກັນດັ່ງນີ້:

ໃຫ້ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສືບຕໍ່ຈັດຕັ້ງປະຕິບັດຄຳພິພາກສາ ສະບັບເລກທີ 63/ລລ.ພ ລົງວັນທີ 25 ຕຸລາ 2017 ຂອງສານປະຊາຊົນສູງສຸດ ຕາມຂັ້ນຕອນຂອງກົດໝາຍ ຖ້າຜູ້ກ່ຽວບໍ່ປະຕິບັດກໍ່ໃຫ້ນຳໃຊ້ມາດຕະການໃນການປະກາດຂາຍຊັບທີ່ສານອາຍັດຕາມຂັ້ນຕອນຂອງກົດໝາຍຕໍ່ໄປ.

ກອງປະຊຸມໄດ້ສຳເລັດລົງໃນເວລາ **16: 00** ໂມງ, ຕອນແລງ ຂອງວັນທີ **20 ກຸມພາ 2019** ແລະ ໄດ້ອ່ານໃຫ້ທຸກພາກສ່ວນທີ່ເຂົ້າຮ່ວມຮັບຟັງ, ຖືກຕ້ອງແລ້ວຈຶ່ງໄດ້ລົງລາຍເຊັນໄວ້ເພື່ອເປັນຫຼັກຖານ.

**ປະທານກອງປະຊຸມ** **ຜູ້ບັນທຶກ**

ຢ່າຢູ່ຕ້າ ລ່າຊາຊໍ່

**ຄະນະກຳມະການ**

1.......................................

2.......................................

3.......................................

4.......................................

5.......................................

6.......................................

7.......................................

8.......................................

9.......................................

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຈົດໝາຍບັນທຶກ
# ການປະຕິບັດຄໍາຕັດສິນຂອງສານ

- ອີງຕາມ ມາດຕາ 21, 28ຂອງກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານສະບັບປັບປຸງ 2008.
- ອີງຕາມ ຄຳສັ່ງ☐, ຄຳຊີ້ຂາດ☐, ຄຳຕັດສິນ☐, ຄຳພິພາກສາ☑, ຂອງສານປະຊາຊົນ.................**ສູງສຸດ**..............
  ສະບັບເລກທີ 63/ລລ.ພ ລົງວັນທີ 25 ຕຸລາ 2017.

**ລະຫວ່າງ**

**ທ້າວ ເພັດຈຳພອນ ຂຸນດາລາ.....................................................................................ໂຈດ**
**ນາງ ບຸນທັນ....................................................................................................ຈຳເລີຍ**

## ກ່ຽວເລື່ອງ : ທວງເອົາເງິນຄືນ.

ໃນວັນທີ 25 / 2 / 2019 ເວລາ 10 : 50 ໂມງທີ່ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານແຂວງ ຫຼວງພະບາງ ໄດ້ມີ ນາງ ບຸນທັນ ( ຈຳເລີຍ ) ໄດ້ເຂົ້າມາຮັບຊາບຕໍ່ກັບແຈ້ງການ ສະບັບເລກທີ 554/ກຍ.ກຄສ ລົງວັນທີ 17 ທັນວາ 2018 ຂອງກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ກະຊວງຍຸຕິທຳ ແລະ ບົດບັນທຶກກອງປະຊຸມ ສະບັບລົງວັນທີ 20 ກຸມພາ 2018 ຂອງຄະນະກຳມະການຄົ້ນຄ້ວາຈັດຕັ້ງປະຕິບັດຄຳຕັດສິນຂອງສານ. ພ້ອມນັ້ນຍັງໄດ້ຕື່ມອີກວ່າ :

1. ຢາກໃຫ້ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໂຈະການຈັດຕັ້ງປະຕິບັດຄຳຕັດສິນໄປກ່ອນ ເພາະຕົນໄດ້ຂຽນຄຳຮ້ອງໄປເຖິງພາກສ່ວນທີ່ກ່ຽວຂ້ອງແລ້ວຍັງລໍຖ້າແຕ່ຄຳຕອບຈາກພາກສ່ວນທີ່ກ່ຽວຂ້ອງ.
2. ຕົນຂໍເວລາແລ່ນເອກະສານໄປຫາ ທຸກພາກສ່ວນທີ່ກ່ຽວຂ້ອງເສຍກ່ອນຈົນສິ້ນສຸດຂະບວນການຍຸຕິທຳ ຕົນຈຶ່ງຈະເຫັນດີປະຕິບັດຕາມຄຳພິພາກສາຂອງສານ.

ດັ່ງນັ້ນ, ຈຶ່ງເຮັດຈົດໝາຍບັນທຶກນີ້ໄວ້ ພ້ອມທັງໄດ້ອ່ານໃຫ້ທຸກຄົນເຂົ້າຮ່ວມຮັບຊາບແລ້ວ ຈຶ່ງພ້ອມກັນລົງລາຍເຊັນເພື່ອໄວ້ເປັນຫຼັກຖານ.

| ຈຳເລີຍ | ຜູ້ບັນທຶກ | ພະນັກງານປະຕິບັດຄຳຕັດສິນ |
|---|---|---|